**ທ້າຍປີເດີນທາງໄປທ່ຽວດິນແດນໄຕ້ຫວັນສຸດທີ່ປະທັບໃຈ**

ໄປທ່ຽວໃຕ້ຫວັນທ່ານພຽງແຕ່ຈ່າຍ 10 ລ້ານ/5ວັນ ເທົ່ານັ້ນ? ບໍ່ໄດ້ຂີ້ໂມ້ຈັກດີ້ເລີຍ!

**ເບິ່ງໂດຍຜິວເຜີນທົ່ວໄປໃຕ້ຫວັນກໍ່ທໍາມະດາ ແຕ່ເນື້ອແທ້ແລ້ວມີຫຼາຍສິ່ງທີ່ເປັນຕາປະທັບໃຈກໍາລັງລໍຖ້າທ່ານໄປສໍາຜັດ! ຍ້ອນຄ່າຄອງຊີບຂອງຄົນຢູ່ທີ່ນັ້ນບໍ່ສູງເກີນໄປ ດັ່ງນັ້ນລາຄາສິນຄ້າຈຶ່ງເປັນທີ່ເພິ່ງພໍໃຈ. ໃຕ້ຫວັນເຖິງວ່ານ້ອຍກໍຕາມ ແຕ່ສະຖານທີ່ປະລັກຕານັ້ນບໍ່ສາມາດນັບໄດ້ໝົດ. ເມື່ອທ່ານໄດ້ອ່ານຂໍ້ມູນລຸ່ມນີ້ແລ້ວ ຈະເຮັດໃຫ້ທ່ານຂຶ້ນແຜນໄປທ່ຽວເມືອງໃຕ້ຫວັນໃນປີນີ້ທັນທີ!**

**1. ຕະຫຼາດມືດທີ່ເຕັມໄປດ້ວຍສິນຄ້າແຟຊັ້ນລາຄາ "ຖືກສຸດໆ".**

ສິນຄ້າຢູ່ໃຕ້ຫວັນທັງງາມທັງລາຄາຖືກປານໃຫ້ລ້າ. ຊໍ້າບໍ່ຫນໍາທ່ານຍັງສາມາດ "ຊື້ 1 ອັນລາຄາ 5 ກີບ, ຊື້ 3 ອັນລາຄາແຕ່ລະອັນຍັງເຫຼືອແຕ່ 3 ກີບເທົ່ານັ້ນ". ໝາຍຄວາມວ່າແຮງຊື້ຫຼາຍແຮງໄດ້ຫຼຸດລາຄາ, ຄືແນວນັ້ນມີໃຜຈະບໍ່ມັກເນາະ!

**2. ບຸນປ່ອຍໂຄມໄຟສຸດແສນໂລແມນຕິກ**

ຖ້າວ່າຢູ່ປະເທດໄທມີບຸນປ່ອຍໂຄມໄຟໃນເດືອນ 11 ແຕ່ຢູ່ໃຕ້ຫວັນພັດມີນໍ້າຕົກຕາດເທີບ ເພີ່ນທີ່ໃຫ້ທຸກ ຄົນປ່ອຍໂຄມໄຟໄດ້ຕະຫຼອດປີ. ສະນັ້ນ,

ເມື່ອທ່ານຕັດສິນໃຈໄປທີ່ນັ້ນແລ້ວຢ່າລືມພາ "ບຸກຄົນພິເສດ" ຂອງທ່ານໄປນໍາ ເພື່ອພ້ອມກັນຂຽນຄໍາອະທິຖານໃສ່ໂຄມໄຟແລ້ວປ່ອຍຂຶ້ນສູ່ທ້ອງຟ້າເດີ!




*ບຸນປ່ອຍໂຄມໄຟສຸດແສນໂລແມນຕິກຢູ່ໃຕ້ຫວັນ*

**3. ຊານົມ**

ເມືອງໃຕ້ຫວັນສົມຊື່ເປັນ "ສະຫວັນບົນດິນ" ອັນແທ້ຈິງໃຫ້ແກ່ຜູ້ທີ່ນິຍົມຊົມຊອບຊານົມ! ບໍ່ວ່າຈະເປັນ ຮ້ານຫລູຫຼາຈົນເຖິງລໍ້ຍູ້ແຄມທາງກໍ່ໄດ້ເຕັມໄປດ້ວຍກິ່ນຫອມຂອງຊານົມ.

**4. ໄປທ່ຽວທຸກບ່ອນທຸກທີ່ດ້ວຍລະບົບທາງລົດໄຟໄຟຟ້າໃຕ້ດິນລາຄາຖືກອີ່ຫຼີ.**

ຂອບລາກັບບັນດາການ “ເອົາປຽບລາຄາບໍລິການ” ຢູ່ປະເທດອື່ນໄດ້ເລີຍ. ຢູ່ເມືອງໄຕ້ຫວັນທ່ານສາມາດໄປໄດ້ທຸກບ່ອນທຸກທີ່ຢ່າງສະດວກສະບາຍໝົດມື້ດ້ວຍລະບົບທາງລົດໄຟໄຟຟ້າໃຕ້ດິນລາຄາຖືກ ອີ່ຫຼີ ລາຄາພຽງເທົ່າກັບຈອກຊານົມເຈິ່ນເຈົ່າເທົ່ານັ້ນ.

**5. ວາຍຟາຍ ຟຣີທຸກບ່ອນທຸກສະຖານທີ່**

ທ່ານຈະສຳພັດໄດ້ຄວາມສະດວກສະບາຍ ຍ້ອນວ່າບໍ່ຈຳເປັນສິ້ນເປືອງໃຊ້ລະບົບ 3G ທີ່ແພງແຕ່ພັດ ໂຫຼດຂໍ້ມູນຊ້າ, ບໍ່ຈຳເປັນແລ່ນເໜືອແລ່ນໃຕ້ຖາມລະຫັດວາຍຟາຍ, ເພາະຢູ່ໃຕ້ຫວັນທ່ານສາມາດເຂົ້າ ອິນເຕີເນັດທັງເວັນທັງຄືນໄດ້ສະບາຍໂດຍບໍ່ເປືອງເງິນຈັກກີບ.

**6. ສະຫວັນແຫ່ງອາຫານ**

ອາຫານໃຕ້ຫວັນຫຼາກຫຼາຍເມນູທີ່ແຊບຊ້ອຍ. ມີເຂົ້າໜົມ Daifuku, ເຂົ້າໜົມໝາກນັດໄສ້ໄຂ່ແດງ, ກຸ້ງວ, ໄຂ່ເປັດສະໝູນໄພ, ເຂົ້າໜົມຜັກກາດຂາວ, ເຂົ້າໜົມເຄັກ bolo, ກາລະເປົາ, ໝາກຈັບ, ກະແລ້ມທີມະຕົ່ມອີກ! ເມື່ອເວົ້າເຖິງຮ້ານອາຫານຍັງມີ ມີ່ງົວ, ເຂົ້າກັບຊີ້ນໝູຕົ້ມເຄັມ, ໄຂ່ທອດຫອຍ ນາງລົມ, ມີ່ danzai, ປາທະເລ, ມີ່ຫອຍນາງລົມ, ... ນີ້ເປັນພຽງສ່ວນໃດສ່ວນໜຶ່ງເທົ່ານັ້ນ!!!




***ສະຫວັນແຫ່ງອາຫານ, ຄວາມໄຝ່ຝັນຂອງຜູ້ນິຍົມການກິນອາຫານ***



*ເມືອງໃຕ້ຫວັນສວຍສົດງົດງາມແຕ່ກໍ່ມີລັກສະນະທັນສະໄໝ*

ແລະ ຍິ່ງໄປກວ່ານັ້ນ, ນັບຈາກນີ້ໄປນັກທ່ອງທ່ຽວຊາວຫວຽດນາມໄດ້ຮັບການຍົກເວັ້ນວີຊາທີ່ມີເງື່ອນໄຂ ເມື່ອເດີນທາງໄປໃຕ້ຫວັນອີກດ້ວຍ! ແລ້ວທ່ານເດ ຍັງຈະລໍຖ້າຫຍັງອີກ ໄປໃຕ້ຫວັນກັນເລີຍ!

**ຂຽນໂດຍ: ເວແຫງ**

**tinnhanhonline.vn**

**ສາທາລະນະສຸກ**

ກະຊວງສາທາລະນະສຸກ ແລະ ສະຫວັດດີການໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ 7 ປີ 2013, ທີ່ຮັບຜິດຊອບຂົງເຂດສາທາລະນະສຸກອົງຄະນະຍາດ, ບໍລິການດ້ານສາທາລະນະສຸກ ແລະ ສະຫວັດດີການ ສັງຄົມ, ປະກັນສຸຂະພາບທົ່ວປວງຊົນເລີ່ມແຕ່ປີ 1995 ກໍ່ຂຶ້ນກັບກະຊວງນີ້ເປັນຜູ້ຄຸ້ມຄອງ. ປັດຈຸບັນນີ້, ມີປະຊາຊົນ 99,5% ໄດ້ເຂົ້າຮ່ວມປະກັນສຸຂະພາບທົ່ວປວງຊົນ, ປະກັນສຸຂະພາບທົ່ວປວງຊົນກໍ່ໃຫ້ ການຊ່ວຍເຫຼືອດ້ານຄ່າໃຊ້ຈ່າຍສາທາລະນະສຸກໃຫ້ແກ່ຄອບຄົວຜູ້ມີລາຍຮັບຕໍ່າ, ບຸກຄົນຜູ້ທີ່ສໍາເລັດທະ ຫານພັນທະ, ເດັກນ້ອຍອາຍຸຕໍ່າກວ່າ 3 ປີ, ຄົນຫວ່າງງານ, ຄອບຄົວຜູ້ປະສົບໄພ, ຄົນຜູ້ເຖົ້າຜູ້ແກ່ ແລະ ຄົນເສຍອົງຄະ. ປະກັນສຸຂະພາບທົ່ວປວງຊົນກວມປະມານ 5,44% ຂອງ GDP, ອາດຈະແມ່ນຜູ້ນໍາໃຊ້ແຮງງານ ຫຼື ບຸກຄົນເສຍຄ່າປະກັນສຸຂະພາບ.

ປີ 2013, ອັດຕາການຕາຍຂອງເດັກເກີດໃໝ່ຢູ່ໃຕ້ຫວັນແມ່ນ 3,9%, ແຕ່ລະ10 ພັນຄົນຈະມີ 20,02 ທ່ານໝໍ, 5,31 ທັນຕະແພດ ແລະ 69,01 ຕຽງ. ສະຖິຕິປີ 2012, ໃຕ້ຫວັນມີໂຮງໝໍ 502 ແຫ່ງ ແລະ 20.935 ຫ້ອງກວດພະຍາດ, ໃນນັ້ນ ມີໂຮງໝໍລັດ 82 ແຫ່ງ ແລະ ຫ້ອງກວດພະຍາດລັດ 447 ແຫ່ງ. ຍ້ອນລະບົບສາທາລະນະສຸກໄດ້ຮັບການປັບປຸງເທື່ອລະກ້າວນັ້ນ, ຈຶ່ງເຮັດໃຫ້ອາຍຸຍືນ ສະເລ່ຍຂອງຜູ້ຊາຍ ແລະ ຜູ້ຍິງ ສູງຂຶ້ນເຖິງ 76,2 ແລະ 83 ປີ. ປີ 2012 ພະຍາດທີ່ພາໃຫ້ເສຍ ຊີວິດຫຼາຍກວ່າໝູ່ແມ່ນພະຍາດມະເຮັງ, ໂລກຫົວໃຈ, ໂລກຫຼອດເລືອດຫົວໃຈ ແລະ ປອດອັກເສບ.

ແນໃສ່ຫລຸດຜ່ອນການເສຍຊີວິດຂອງຄົນເຈັບຍ້ອນພະຍາດມະເຮັງປອດ, ນອກຈາກຄຸ້ມຄອງການຜະ ລິດຢາສູບແລ້ວ, ລັດຖະບານຍັງຫ້າມບໍ່ໃຫ້ສູບຢາຕາມສະຖານທີ່ເຮັດວຽກ, ໂຮງຮຽນ, ຮ້ານອາຫານ, ສະຖານີລົດໄຟ ແລະ ສະຖານທີ່ອື່ນໆອີກ, ສົ່ງເສີມໃຫ້ສ້າງເຂດສູບຢາໂດຍມີລົມລ່ວງທີ່ໄດ້ກໍານົດໄວ້. ນອກຈາກການນໍາໃຊ້ວິທີການການແພດທັນສະໄໝແລ້ວ, ຢູ່ໃຕ້ຫວັນຍັງນໍາໃຊ້ການບົ່ງມະຕິແບບແຜນ ບູຮານຈີນ ເພື່ອປິ່ນປົວຢ່າງກວ້າງຂວາງ, ທົ່ວປະເທດມີໂຮງໝໍປິ່ນປົວແບບແຜນບູຮານຈີນ 14 ແຫ່ງ, ຫ້ອງກວດພະຍາດປິ່ນປົວແບບແຜນບູຮານຈີນ 3.462 ແຫ່ງ ແລະ ມີໂຮງໝໍປິ່ນປົວຕາມແບບແຜນ ຕາເວັນຕົກທີ່ປະສົມມີພະແນກປິ່ນປົວແບບແຜນບູຮານຈີນ 77 ແຫ່ງ. ອົງການຄຸ້ມຄອງໂລກພະຍາດ ທີ່ຂຶ້ນກັບກະຊວງສາທາລະນະສຸກ ແລະ ສະຫວັດດີການ ສ່ວນໃຫຍ່ແມ່ນຮັບຜິດຊອບການຕິດຕາມ ກວດກາ, ສືບສວນ, ໂຄສະນາ ແລະ ປິ່ນປົວໂລກພະຍາດ, ກໍ່ມີຫຼາຍເທື່ອໄດ້ປະເຊີນກັບໂລກພະຍາດ ວັນນະໂລກ, ໄຂ້ເລືອດອອກ Dengue, ໄວຣັດລໍາໄສ້, ອາການພະຍາດຫົວໃຈກະທັນຫັນໜັກ, ໄວຣັດໄຂ້ຫວັດ A ຈັດໃນກຸ່ມ H7N9. ນອກນີ້, ຍັງມີອົງການຄຸ້ມຄອງອາຫານ ແລະ ການຢາ ທີ່ຂຶ້ນກັບກະ ຊວງສາທາລະນະສຸກ ແລະ

ສະຫວັດດີການ, ມີໜ້າທີ່ຮັບຜິດຊອບຄວາມປອດໄພ ແລະ ຄຸນຜົນປະໂຫຍດຂອງຢາ, ວັກແຊ້ງ, ອຸປະກອນການແພດ, ອາຫານ, ອາຫານເສີມ ແລະ ເຄື່ອງສຳອາງ.

**ເສດຖະກິດ-ການຄ້າ**

ໃຕ້ຫວັນໄດ້ຫັນເປັນອຸດສາຫະກຳຢ່າງວ່ອງໄວໃນໄລຍະເວລາເຄິ່ງທ້າຍຂອງສະຕະວັດທີ 20 ແລະ ສິ່ງ

ນີ້ໄດ້ຮັບນາມວ່າ "ມະຫັດສະຈັນໃຕ້ຫວັນ" (台灣奇蹟  ໃຕ້ຫວັນຜົນງານທີ່ຍອດຍິ່ງ).

ໃຕ້ຫວັນພ້ອມ ກັບເກົາຫຼີໃຕ້, ຮ່ອງກົງ ແລະ ສິງກະໂປ ໄດ້ເອີ້ນວ່າມັງກອນ 4 ໂຕຂອງທະວີບອາຊີ (ຫຼື ເສືອ 4 ໂຕ ຂອງທະວີບອາຊີ). ປີ 2014 GDP ຂອງໃຕ້ຫວັນແມ່ນ 529,6 ຕື້ໂດລາສະຫະລັດ, GDP ສະເລ່ຍຕໍ່ ຫົວຄົນຂອງໃຕ້ຫວັນແມ່ນ 22.296 ໂດລາສະຫະລັດ, ຈັດຢູ່ອັນດັບທີ 19 ຂອງໂລກ.
ປີ 2015, ໃນບົດລາຍງານການແຂ່ງແຍ່ງທົ່ວໂລກໃນເວທີເສດຖະກິດໂລກ ໄດ້ຈັດໃຕ້ຫວັນຢູ່ອັນດັບທີ 14. ອີງຕາມສະຖິຕິຂອງກະຊວງການເງິນ ສປ ຈີນ, ປີ 2014 ລວມຍອດການນຳເຂົ້າ-ສົ່ງອອກ ບັນລຸໄດ້ 588,07 ຕື້ໂດລາສະຫະລັດ, ໃນນັ້ນ ສົ່ງອອກ 313,84 ຕື້ໂດລາສະຫະລັດ ແລະ ນຳເຂົ້າ 274,23 ຕື້ໂດລາສະຫະລັດ. ການຜະລິດກະສິກຳກວມເອົາອັດຕາສ່ວນ 32,1% ຂອງ GDP ໃນປີ 1952 ແລະ ຫລຸດລົງຍັງເຫຼືອພຽງແຕ່ 1,7% ໃນປີ 2013. ຕ່າງກັບບັນດາປະເທດເຊັ່ນ ເກົາຫຼີໃຕ້ ຫຼື ຍີ່ປຸ່ນ,
ເສດຖະກິດໃຕ້ຫວັນຕົ້ນຕໍແມ່ນວິສາຫະກິດຂະໜາດກາງ ແລະ ນ້ອຍ, ປ່ຽນແທນໃຫ້ບັນດາວິສາຫະກິດຂະໜາດໃຫຍ່. ໃຕ້ຫວັນນຳເຂົ້າຫຼາຍທີ່ສຸດຈາກຈີນແຜ່ນດິນໃຫຍ່, ຍີ່ປຸ່ນ, ສະຫະລັດອາເມລິກາ, ອາຫຼັບ ແລະ ເກົາຫຼີໃຕ້, ບັນດາປະເທດທີ່ໃຕ້ຫວັນໄດ້ສົ່ງອອກຫຼາຍທີ່ສຸດ ແມ່ນປະເທດຈີນແຜ່ນດິນ ໃຫຍ່, ຮ່ອງກົງ, ສະຫະລັດອາເມລິກາ, ຍີ່ປຸ່ນ ແລະ ສິງກະໂປ, ບັນດຄູ່ຮ່ວມມືການຄ້າຕົ້ນຕໍອື່ນໆ ແມ່ນ: ມາເລເຊຍ, ເຢຍລະມັນ, ອິສ໌ຕາລີ, ອິນໂດເນເຊຍ, ຟີລິບປິນ, ຫວຽດນາມ, ໄທ.